ພັນທະມິດເພື່ອປະຊາທິປະໄຕໃນລາວ
ALLIANCE FOR DEMOCRACY IN LAOS
Alliance pour la Démocratie au Laos

Letmather Str.71, 58119 Hagen, Germany. Phone: 0049( 2334) 44 44 668, E-Mail: alliance-lao@alice.de
www.laoalliance.org

# ຖະແລງການ ພປລ ປະນາມ ທາງການ ສປປລາວ
# ກ່ຽວກັບການຈັບກຸມ ທ້າວກອດ ຄົນງານລາວກັບຈາກໄທ
# ທີ່ ໂພສ ວີດີໂອ ຕໍ່ວ່າສະຖານທີ່ກັກຕົວ

ອີງຕາມຂ່າວ ຈາກ ວິທະຍຸເອເຊັຍເສຣີ ແລະ ຈາກ ຫລາຍແຫລ່ງຂ່າວ ແຈ້ງໃຫ້ຊາບວ່າ ໃນວັນທີ່ 28 ມີນາ 2020 ຜ່ານມາ ເຈົ້າຫນ້າທີ່ ທາງການ ສປປລາວ ໄດ້ທຳການ ຈັບກຸມ ທ້າວ ກອດ ອາຍຸ 27 ປີ ຊາວບ້ານປາກທວາຍ ເມືອງທ່າພະບາດ ແຂວງບໍລິຄຳໄຊ ຊຶ່ງເປັນນຶ່ງ ໃນຈຳນວນຄົນງານລາວທີ່ກັບຈາກປະເທດໄທ ໂດຍອ້າງວ່າ ຜູ້ກ່ຽວບໍ່ໃຫ້ການຮ່ວມມື ເຈົ້າຫນ້າທີ່ ໃນການກັກຕົວ ເປັນເວລາ 14 ວັນ ເພື່ອເຝົ້າລະວັງພະຍາດໂຄວິດ 19.

ອີງຕາມວີດີໂອທີ່ ທ້າວກອດໄດ້ໂພສ ອອກທາງ ເຟສບຸກ ເຫັນວ່າ ຜູ້ກ່ຽວໄດ້ ຕໍ່ວ່າເລື່ອງສະຖານທີ່ກັກຕົວໃນຫ້ອງຮຽນ ທີ່ ບໍ່ໄດ້ມີການທຳຄວາມສະອາດ , ບໍ່ມີ ແພດຫມໍ ດູແລ ແລະຍັງໃຫ້ຢູ່ນຳກັນຫລາຍຄົນໃນຫ້ອງດຽວ ຊຶ່ງຜູ້ກ່ຽວເປັນຫວ່ງ ວ່າຈະເປັນການເຮັດໃຫ້ຕິດໂລກລະບາດ ນຳກັນ. ເຖິງແມ່ນວ່າ ຜູ້ກ່ຽວໄດ້ອອກມາປະກາດ ຂໍອະໄພ ແລ້ວກໍຕາມ ແຕ່ ເຈົ້າຫນ້າທີ່ທາງການ ສປປລ ກໍຍັງໄດ້ຈັບກຸມໃສ່ກັບມືຜູ້ກ່ຽວ.

ນັບແຕ່ວັນທີ່ 23 ມີນາຜ່ານມາ ຄົນງານລາວ ທີ່ກັບຈາກໄທ ຈຳນວນ ຫລາຍສິບພັນຄົນໄດ້ເດີນ ທາງຜ່ານຊາຍແດນດ່ານເຂົ້າເມືອງ ບາງພາກສ່ວນ ກໍມີລົດຂອງກອງທັບ ສປປລາວ ໄປຮັບຂົນ ເອົາ ເຂົາເຈົ້າໄປ ໂດຍບໍ່ຮູ້ຈຸດຫມາຍປາຍທາງວ່າ ເອົາໄປ ກັກໄວ້ແຫ່ງໃດ ໂດຍບໍ່ມີການອອກຂ່າວ ເປີດເຜີຍເປັນທາງການ.

ນັບຕັ້ງແຕ່ມີບັນຫາ ການລະບາດພະຍາດໂຄວິດ 19 ໃນໂລກ ຜ່ານມາ, ທາງການສປປລາວ ໄດ້ ປະກາດແລ້ວປະກາດາດ ອີກວ່າ ບໍ່ມີໃຜຕິດໂລກ ພະຍາດ ດັ່ງກ່າວໃນ ສປປລາວ , ໃນທີ່ສຸດ ຈຶ່ງມາປະກາດ ໃນປັດຈຸບັນວ່າ ມີພຽງ ເກົ້າ ຄົນ ທີ່ຕິດໂລກດັ່ງກ່າວ ( ສະພາບວັນທີ່31 ມີນາ) 2020, ທັ້ງໆທີ່ວ່າ ມີຜູ້ລົ້ມຕາຍ ໃນຫລາຍທ້ອງຖິ່ນ ທີ່ປະຊາຊົນສົງໃສວ່າ ອາດແມ່ນຍ້ອນພະຍາດໂຄວິດ, ແຕ່ການ ທາງການ ສປປລາວ ກໍ ຖິ້ມໃສ່ວ່າ ຍ້ອນພະຍາດຜູ້ກ່ຽວ ໂດຍ ບໍ່ມີການ ກວດກາສືບສວນ, ແລ້ວ ຍັງບັງຄັບປະຊາຊົນລາວ ບໍ່ໃຫ້ອອກຂ່າວເລື່ອງການລະບາດໂລກນີ້ ຢ່າງເດັດຂາດ .

ພວກ ເຮົາ ອົງການ ພັນທະມິດເພື່ອປະຊາທິປະໄຕໃນລາວ ພ້ອມດ້ວຍ ປະຊາຊົນລາວ ຜູ້ຮັກຫອມຄວາມເປັນທັມ ຢູ່ໃນ ແລະ ນອກປະເທດໃນທົ່ວໂລກ ເຫັນວ່າ ການຈັບກຸມທ້າວກອດຂອງທາງການ ສປປລາວ ດ້ວຍການ ພິກປິ້ນ ຄວາມເປັນຈິງ ແລ້ວຖິ້ມໂທດໃສ່ ເປັນວິທີການເພື່ອ ຂົ່ມຂູ່ຫລູກຫລານລາວ ບໍ່ໃຫ້ ມີສິດທິໃນການປາກເວົ້າໃນການຮ້ອງຂໍຄວາມເປັນທັມ, ທັ້ງນີ້ ກໍ່ຍ້ອນວ່າ ເຈົ້າຫນ້າທີ່ທ້ອງ ຖິ່ນ ບໍ່ເອົາໃຈໃສ່ ດູແລ ປະຊາຊົນ ຢ່າງ ແທ້ຈິງ ແລະ ກໍຢ້ານວ່າລູກຫລານຈະເປີດເຜີຍຄວາມເປັນຈິງ.

ການທີ່ ທາງການ ສປປລາວ ເອົາ ລູກຫລານ ຄົນງານລາວ ກັບຈາກໄທ ໄປກັກຄົນຢູ່ໃນຫ້ອງໃຫຍ່ ຕ່າງໆ ຫລາຍຄົນ ໂດຍບໍ່ມີການແຍກຕົວ ແລະ ທຳການການ ຊຸມຊຸມ ທີ່ຢູ່ນຳກັນຫລາຍຄົນ ໂດຍບໍ່ໃຫ້ຫ່າງກັນ ຢ່າງຕ່ຳ ແມັດເຄິ່ງຂຶ້ນໄປ ເປັນການກະທຳ ທີ່ຜິດ ຕໍ່ຫລັກການສາກົນ ກໍຄື ຂອງອົງການອະນາໄມໂລກ ທີ່ບົ່ງໄວ້.

ເປັນທີ່ສັງເກດເຫັນວ່າ ການກັກຕົວ ເຝົ້າລະວັງໂລກໂຄວິດ 19 ໃນ ສປລາວ ມີແຕ່ການ ມີການກັກຕົວຄົນງານລາວກັບຈາກໄທເທົ່ານັ້ນ ແຕ່ບໍ່ເຫັນມີການ ກັກຕົວຊາວຈີນ ແລະ ຊາວວຽດນາມ ຈຳນວນຫລາຍພັນຄົນ ທີ່ຫລັ່ງໄຫລຜ່ານຊາຍແດນເຂົ້າມາລາວ ເຊິ່ງເປັນກະທຳ ຂອງທາງການ ສປປ ລາວ ທີ່ບໍ່ກ້ຳເກິ່ງ.

ທາງການ ສປປລາວ ໄດ້ຮັບການຊ່ວຍເຫລືອຂອງສາກົນຢ່າງມະຫາສານໃນການ ປ້ອງກັນພະຍາດ ໂຄວິດ 19 ໃນນັ້ນ ຈາກ ສະຫະຣັຖ ອະເມຣິກາ 102 ລ້ານ ໂດລາ ແລະ ຈາກ ທະນາຄານພັດທະນາອາຊີ ADB 200 ລ້ານໂດລາ ເງິນຈຳນວນດັ່ງກ່າວ ທາງການລາວ ໄດ້ເອົາໄປໃຊ້ຫຍັງແດ່ບໍ່ໄດ້ແຈ້ງໃຫ້ ປະຊາຊົນລາວຊາບ ແຕ່ປະການໃດເລີຍ.

ດັ່ງນັ້ນພວກເຮົາຈຶ່ງທວງມາຍັງ ທາງການ ສປປລາວ ດັ່ງນີ້:

1. ທວງໃຫ້ປ່ອຍຕົວ ທ້າວກອດ ແລະ ລູກຫລານ ຄົນງານລາວກໍຄື ປະຊາຊົນ ລາວຜູ້ອື່ນໆ ທີ່ອອກມາຮຽກຮ້ອງເອົາຄວາມເປັນທັມ ຢ່າງຮີບດ່ວນ ແລະ ບໍ່ມີເງື່ອນໄຂ.
2. ທວງໃຫ້ປະຕິບັດ ຕາມຫລັກສາກົນທີ່ບົ່ງໄວ້ ເປັນຕົ້ນແມ່ນ ທວງແຍກຕົວ ຜູ້ຖືກກັກເຝົ້າ ແລະ ເວລາ ປະຊຸມ ຢ່າງຫນ້ອຍ ຫ່າງກັນ ແມັດເຄິ່ງ ຂຶ້ນໄປ ຢ່າງຮີບດ່ວນ.
3. ທວງໃຫ້ ທາງການ ສປປລາວ ທຳການ ຕ້ອນຮັບຄົນງານລາວ ທຸກຄົນ ທີ່ກັບຄືນປະເທດ ນັບທັງຜູ້ມີເອກກະສານ ແລະ ບໍ່ມີເອກະສານ ໃຫ້ ເອົາການຊ່ວຍເຫລືອຂອງສາກົນ ໄປຊ່ວຍເຂົາເຈົ້າໃຫ້ ໄດ້ຮັບການກິນຢູ່ຢ່າງເຫມາະສົມ.
4. ທວງໃຫ້ ທາງການ ສປປລ ແຈ້ງຂ່າວຂໍ້ມູນຄວາມຈິງ ລາຍຊື່ ແລະ ສະຖານທີ່ກັກຂັງຄົນງານລາວ ທີ່ຍາດຕິພີ່ນອ້ງເຂົາເຈົ້າຊອກຫາ.
5. ທວງໃຫ້ ທາງການ ສປປລາວ ຍອມເປີດເຜີຍຂໍ້ມູນ ຄວາມຈິງ ຈຳນວນຜູ້ ທີ່ຕິດ ແລະ ເສັຽຊີວິດ ຍ້ອນໂລກໂຄວິດ 19 ເພື່ອໃຫ້ ປະຊາຊົນຮູຈັກສະພາບການອັນແທ້ຈິງ ໃນການປ້ອງກັນ.
6. ທວງໃຫ້ ມີການນັບຖື ສິດທິຂອງປະຊາຊົນ ໃນການສົ່ງຂ່າວຂໍ້ມູນ ຄວາມເປັນຈິງທີ່ເກີດຂຶ້ນໃນລາວ ທັ້ງນີ້ ກໍເພື່ອໃຫ້ ມີ ພາກສ່ວນກຽວຂ້ອງເຂົ້າໄປ ຊ່ວຍເຫືລອ ແລະ ແກ້ໄຂຢ່າງທັນການ.

ພວກເຮົາ ຮຽກຮ້ອງມາຍັງ ອົງການສາກົນ ດັ່ງນີ້:

1. ຮຽກຮ້ອງໃຫ້ ອົງການ ອະນາໄມໂລກ ພັກດັນທາງການ ສປປລາວ ໃຫ້ ປະຕິບັດ ຕາມຫລັກການ ຂອງສາກົນ ໃນການປ້ອງກນ ໂລກໂຄວິດ 19 .
2. ຮຽກຮ້ອງໃຫ້ ອົງການຈັດຕັ້ງສາກົນ ຕ່າງໆ ຕິດຕາມກວດກາ ຄວາມເປັນຈິງກຽວກັບເຫດການ ບັນຫາໂລກໂຄວິດ 19 ໃນລາວ.
3. ຮຽກຮ້ອງໃຫ້ ອົງການຈັດຕັ້ງສາກົນ ພັກດັນທາງການ ສປປລາວ ໃຫ້ ປະຕິບັດ ຕາມການທັກທວງຂອງພວກເຮົາຂ້າງເທິງນີ້.
4. ຮຽກຮ້ອງໃຫ້ ສະຫະປະຊາຊາດ ພັກດັນທາງການ ສປປລາວ ປະຕິບັດຫລັກການສິດ ທິມະນຸສເປັນ ຕົ້ນແມ່ນ ສິດທິໃນການສະແດງຄວາມຄວາມຄິດເຫັນ ໃນການຮ້ອງຂໍຄວາມເປັນທັມຢ່າງແທ້ຈິງ.

ທີ່ເຢັຽຣະມັນ, ວັນທີ່ 31 ມີນາ 2020




ດຣ. ບຸນທອນ ຈັນທະລາວົງ-ວິເຊີ

ປະທານພັນທະມິຕເພື່ອປະຊາທິປະໄຕໃນລາວ

ສົ່ງໄປທີ່:

- ທ່ານ ທອງລຸນ ສີສຸລິດ, ສຳນັກງານ ນາຍຍົກ ຣັຖມົນຕຣີ ສປປລາວ
- ສະນັກງານ ອົງການ ອະນາໄມໂລກ ທີ່ ນະຄອນ ເຈນີວາ ປະເທດ ສາວິສແລນ
- ສະພາສິດທິມະນຸສ ແລະ ກັມມະການສູງສະປະຊາດຊາດດ້ານສິດທິມະນຸສ  ກ່ຽວກັບ ສປປລາວ
- ອົງການ ນິຣະໂທດກັມສາກົນ
- ອົງການສາກົນ ອື່ນໆດ້ານສິດທິມະນຸສ

---


**Office in Germany: Dr. Bounthone Chanthalavong- Wiese,** President, Letmather Str.71, 58119 Hagen, Germany
Phone: +49-2334-44 44 668, Email: chanthalavong@aol.com

**France:** **Mr.Sompheth Vatthanou** Vice-President , 2 AV Combattant en a.f.n.69140,Rillieux La Pape,
Phone: +33-6-15192201, s.vatthanou@gmail.com

**USA:** **Ms.Khamphene Souvannasane,** regional president ADL chapter of USA , 3837 Rusty Dell
St.Fortworth,TX 76111, Phone:+1-682- 554- 6675 , Email: khamhene@yahoo.com

**Canada:** **Mr.Kambane Anonthisen,** regional president ADL chapter of Canada, 84 Highgatz Rord Kichener ,ONT,
Phone:+1-519-58 80 502, email: khambane@hotmail.com

**Australia:** **Mr.Pheng Sacksady**, regional president ADL chapter of Australia, 6 Quambone Place,Isabella Plains
A.C.T, Phone:+61-2- 923544, Email: pheng-sone52@gmail.com.au

**New Zealand:** **Mr:Bounleuam Vannathy,** Representativ ADL chapter New Zeeland. 86 Champion St,Cannons Creck
Porirua Wellington.NZ. Phne:+644 237 9565,Email: bvannathy@hotmail.com